ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ.112/PTL/2018

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2018

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2018

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03/4/2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ07/1/2011.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2018 ວັນທີ 15 ພຶດສະພາ 2018, ເວລາ 14:30ໂມງ ທີ່ຫ້ອງປະຊຸມ ສຳນັກງານ ປທລ ໂດຍມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດລຸ່ມນີ້:

ວາລະທີ 1:ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານຄັ້ງທີ 3/2018, ເມື່ອວັນທີ 4 ພຶດສະພາ 2018;

ວາລະທີ 2:ຮັບຮອງ ການແບ່ງໂຄງສ້າງຂອງບໍລິສັດອອກເປັນ 2 ບໍລິສັດລູກຄື:

1. ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊຶ່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ);
2. ບໍລິສັດຈັດຈຳໜ່າຍ (ຊຶ່ຍັງບໍ່ເປັນທາງການ) ຈຳກັດ (ບໍລິສັດລູກ);

ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;

ວາລະທີ 3: ພິຈາລະນາ ການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ ພິຈາລະນາ ແລະ ຮັບຮອງເອົາການໂອນຖ່າຍຊັບສິນບາງສ່ວນຂອງ ປທລ ໃຫ້ກັບ 2 ບໍລິສັດລູກ ຕາມອັດຕາສ່ວນທີ່ເໝາະສົມ ທີ່ກຳນົດໄວ້ໃນດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ເພື່ອນຳໄປປະກອບທຶນ, ໃຫ້ນຳສະເໜີເລື່ອງນີ້ຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;

ວາລະທີ 4:ພິຈາລະນາ ການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາຕົວເລກຊັບສິນທີ່ໂອນໄປໃຫ້ກັບ 2 ບໍລິສັດລູກ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພາຍຫຼັງສຳເລັດການໂອນຖ່າຍຊັບສິນເຫຼົ່ານັ້ນ, ໃຫ້ນຳສະເໜີເລື່ອງນີ້ຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;

ວາລະທີ 5:ພິຈາລະນາ ການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນຂາຮຸ້ນແກ່ບໍລິສັດລູກທັ້ງ 2 ບໍລິສັດ, ໃນອັດຕາສັດສ່ວນການຖືຄອງຮຸ້ນ ແມ່ນອີງຕາມກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ ໃຫ້ນຳສະເໜີເລື່ອງນີ້ຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

ວາລະທີ 6: ກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ (Record Date) ໃນວັນທີ 22 ພຶດສະພາ 2018, ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2018;

ວາລະທີ 7: ຮັບຮອງ ວັນທີເປີດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2018 ໃນວັນທີ 1 ມັຖຸນາ 2018 ເວລາ 09:30 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ, ຊຶ່ງຜູ້ຖືຮຸ້ນທີ່ມີສິດເຂົ້າຮ່ວມປະຊຸມຕາມລາຍຊື່ທີ່ປະກົດຕາມການປິດປຶ້ມທະບຽນ 22 ພຶດສະພາ 2018;

ວາລະທີ 8: ກຳນົດວາລະກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈຳປີ 2018 ດັ່ງນີ້:

ວາລະທີ 1: *ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017, ເມື່ອວັນທີ 27 ເມສາ 2018;*

ວາລະທີ 2: *ພິຈາລະນາ ແລະ ຮັບຮອງເອົາການແບ່ງໂຄງສ້າງຂອງບໍລິສັດອອກເປັນ 2 ບໍລິສັດລູກຄື:*

1. *ບໍລິສັດຜູ້ນຳເຂົ້າ ແລະ ສົ່ງອອກນ້ຳມັນເຊື້ອໄຟ (ຊື່ຍັງບໍ່ແມ່ນທາງການ) ຈຳກັດ (ບໍລິສັດລູກ);*
2. *ບໍລິສັດຈັດຈຳໜ່າຍ (ຊື່ຍັງບໍ່ເປັນທາງການ) ຈຳກັດ (ບໍລິສັດລູກ);*

ວາລະທີ 3: *ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາການໂອນຖ່າຍຊັບສິນບາງສ່ວນຂອງ ປທລ ໃຫ້ກັບ 2 ບໍລິສັດລູກ ຕາມອັດຕາສ່ວນທີ່ເໝາະສົມ ທີ່ກຳນົດໄວ້ໃນດຳລັດ ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ເພື່ອນຳໄປປະກອບທຶນ.*

ວາລະທີ 4: *ພິຈາລະນາ ແລະ ຮັບຮອງການມອບອຳນາດໃຫ້ສະພາບໍລິຫານເປັນຜູ້ພິຈາລະນາ ແລະ ຮັບຮອງເອົາຕົວເລກຊັບສິນທີ່ໂອນໄປໃຫ້ກັບ 2 ບໍລິສັດລູກ ແລະ ແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພາຍຫຼັງສຳເລັດການໂອນຖ່າຍຊັບສິນເຫຼົ່ານັ້ນ.*

ວາລະທີ 5: *ພິຈາລະນາ ແລະ ຮັບຮອງການໃຫ້ສິດແກ່ສະພາບໍລິຫານບໍລິສັດ ເຊັ່ນສັນຍາຮຸ້ນສ່ວນກັບ ບໍລິສັດ Puma Energy (Singapore) Pte. Ltd ເປັນຂາຮຸ້ນແກ່ບໍລິສັດລູກທັງ 2 ບໍລິສັດ ໃນອັດຕາສັດສ່ວນການຖືຄອງຮຸ້ນແມ່ນອີງຕາມກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ.*

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ